## ສະຖານທູດລາວ ທີ່ ແບນຊິກ ທົບທວນປະຫວັດຄວາມເປັນມາຂອງວັນແມ່ຍິງສາກົນ ວັນທີ 8 ມີນາ

ເພື່ອເປັນການສະເຫຼີມສະຫຼອງ ວັນແມ່ຍິງສາກົນ ໃນວັນທີ 15 ມີນາ 2014, ສະຖານເອກອັກຄະລັດຖະທູດແຫ່ງສປປ ລາວ ທີ່ ປະເທດແບນຊິກ  ໄດ້ຈັດປາຖະກະຖາກ່ຽວກັບປະຫວັດຄວາມເປັນມາ ຂອງການສ້າງຕັ້ງວັນແມ່ຍິງສາກົນ ໂດຍທ່ານ ນ. ວິໄລລັກ ແສນດວງເດດ, ເລຂານຸການເອກ, ຫົວໜ້າຈຸສະຫະພັນແມ່ຍິງສະຖານທູດ ເປັນຜູ້ບັນຍາຍ.

ທ່ານຍັງໄດ້ເວົ້າເຖິງມູນເຊື້ອອັນປະເສີດຂອງບັນພະບູລຸດແມ່ຍິງລາວ, ບົດບາດ ແລະ ການເຄື່ອນໄຫວຂອງສູນກາງ ສະຫະພັນແມ່ຍິງລາວ ກໍຄືຂອງແມ່ຍິງລາວໃນທຸກຂົງເຂດວຽກງານ ໂດຍສະເພາະໃນການປະຕິບັດຄໍາຂັວນ 3 ດີ,  ການປະກອບສ່ວນໃນການພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ກໍຄືໃນເວທີສາກົນ ແລະ ພາກພື້ນ. ນອກນັ້ນ, ທ່ານ ຍັງ ໄດ້ຊີ້ໃຫ້ເຫັນແນວທາງນະໂຍບາຍຂອງພັກ-ລັດທີ່ໄດ້ໃຫ້ຄວາມສໍາຄັນ ແລະ ສົ່ງເສີມບົດບາດຍິງ-ຊາຍ ຊຶ່ງສະແດງອອກຈໍານວນເອື້ອຍນ້ອງເພດຍິງໄດ້ເພີ້ມຂຶ້ນໃນວົງການນໍາເຊັ່ນ: ໃນອົງການນິຕິບັນຍັດຄື ສະພາແຫ່ງຊາດ, ໃນຄະນະບໍລິຫານງານຂອງລັດຖະບານກໍ່ຄືຢູ່ກະຊວງທະບວງກົມຕ່າງໆລວມທັງຂະແໜງການພົວພັນຕ່າງປະເທດ,

ຫຼັງຈາກນັ້ນ, ທ່ານ ເອກອັກຄະລັດຖະທູດມະໂນຣົມ ໂພນໄຊຍາ ໄດ້ຊົມເຊີຍເພດຍິງຊາວລາວເຖິງຢູ່ຫ່າງໄກປະເທດຊາດກໍ່ຕາມແຕ່ກໍຍັງຮັກສາວັດທະນະທໍາອັນດີງາມຂອງຊາດລາວ  ໂດຍສະເພາະການນຸ່ງຖື ແລະ ປະກອບສ່ວນຮ່ວມກັບສະຖານທູດໃນການສົ່ງເສີມຮີດຄອງປະເພນີອັນດີງາມຂອງລາວເຮົາໃນງານຕ່າງໆ.